ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

໖໖໖ ★ ໖໖໖

ແຂວງອັດຕະປື

ເລກທີ 470.../ ຈຂ.ອປ

ອັດຕະປື, ວັນທີ 10 ເມສາ 2016

# ຂໍ້ຕົກລົງ

## ຂອງເຈົ້າແຂວງ

## ວ່າດ້ວຍການຮັບຮອງເອົາຕົ້ນໝາກຂາມ ເປັນຕົ້ນໄມ້ປະຈຳແຂວງອັດຕະປື.

- ອີງຕາມ : ກົດໝາຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003, ໝວດທີ III, ມາດຕາ 14 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ : ທິດຊີ້ນຳຂອງຄະນະປະຈຳພັກແຂວງ ຄັ້ງວັນທີ 24 / 02 / 2016.
- ອີງຕາມ: ໃບສະເໜີຂອງ ພະແນກກະສິກຳ ແລະ ປ່າໄມ້ ແຂວງສະບັບເລກທີ 190/ກປມ.ອປ, ລົງວັນທີ 21 /03 /2016.

## ເຈົ້າແຂວງອອກຂໍ້ຕົກລົງ

**ມາດຕາ 01 :** ເຫັນດີຮັບຮອງຕົ້ນໝາກຂາມ ເປັນຕົ້ນໄມ້ປະຈຳແຂວງ ອັດຕະປື, ເນື່ອງຈາກວ່າ ຕົ້ນໝາກຂາມ ເປັນຕົ້ນໄມ້ທີ່ເໝາະກັບສະພາບດິນຟ້າອາກາດຢູ່ແຂວງອັດຕະປື ແລະ ປະຊາຊົນບັນດາເຜົ່າ ເຄີຍມີມູນເຊື້ອປູກເປັນຂອງຄອບຄົວຕາມບ້ານເຮືອນ,ຮົ້ວສວນໃນໄລຍະຜ່ານມາເປັນເວລາດົນນານ.

**ມາດຕາ 02 :** ມອບໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອພ້ອມກັນຊຸກຍູ້ແນະນຳເຕັກນິກການປູກໃຫ້ປະຊາຊົນເຂົ້າໃຈ.

**ມາດຕາ 03 :** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ບ່ອນສົ່ງ :

| | |
|---|---|
| ຫ້ອງວ່າການປົກຄອງແຂວງ | 01 ສະບັບ. |
| ພະແນກ ກະສິກຳ ແລະ ປ່າໄມ້ | 01 ສະບັບ. |
| ເຈົ້າເມືອງ 5 ຕົວເມືອງລະ | 01 ສະບັບ |
| ຫ້ອງການກະສິກຳ ແລະ ປ່າໄມ້ເມືອງລະ | 01 ສະບັບ. |
| ສຳເນົາ | 01 ສະບັບ. |

ດຣ.ນາມ ວິຍະເກດ